ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ
ຄະນະປະຈຳການ

ເລກທີ 05/ຄລຊ
ນະຄອນຫຼວງວຽງຈັນ, ວັນທີ 11/06/24

# ຂໍ້ຕົກລົງ
# ວ່າດ້ວຍການແຕ່ງຕັ້ງ
# ອະນຸກຳມະການ ແລະ ກອງເລຂາ ຂອງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015

ອີງຕາມມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການລະດັບຊາດ ເພື່ອປັບປຸງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປີ 2015 ສະບັບເລກທີ 15/ກມສພ, ລົງວັນທີ 22 ພຶດສະພາ 2024;

ອີງຕາມການຕົກລົງເຫັນດີຂອງກອງປະຊຸມຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ຄັ້ງວັນທີ 7 ມິຖຸນາ 2024

## ຄະນະປະຈຳການ ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ຕົກລົງ:

**ມາດຕາ 1 ແຕ່ງຕັ້ງບັນດາອະນຸກຳມະການຕ່າງໆ ຊຶ່ງປະກອບດ້ວຍອະນຸກຳມະການ ດັ່ງນີ້:**

1. **ອະນຸກຳມະການເນື້ອໃນ:**
   1) ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ຮອງນາຍົກລັດຖະມົນຕີ ເປັນຫົວໜ້າ;
   2) ທ່ານ ຣສ. ປອ. ທອງສະລິດ ມັງໜໍ່ເມກ ຫົວໜ້າຫ້ອງວ່າການສູນກາງພັກ ເປັນຮອງຫົວໜ້າ;
   3) ທ່ານ ປອ. ກອງແກ້ວ ໄຊສົງຄາມ ຫົວໜ້າສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ເປັນຮອງຫົວໜ້າ;
   4) ທ່ານ ປອ. ວິໄລວົງ ບຸດດາຄຳ ລັດຖະມົນຕີກະຊວງພາຍໃນ ເປັນຮອງຫົວໜ້າ;
   5) ທ່ານ ລາວປ່າວຊົ່ງ ນະວົງໄຊ ຮອງຫົວໜ້າໂຄສະນາອົບຮົມສູນກາງພັກ ເປັນຮອງຫົວໜ້າ;
   6) ທ່ານ ຣສ. ພູວົງ ອຸ່ນຄຳແສນ ຫົວໜ້າສະຖາບັນການເມືອງການປົກຄອງແຫ່ງຊາດ ເປັນຮອງຫົວໜ້າ;
   7) ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ເປັນຄະນະ;
   8) ທ່ານ ພົຕ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຄະນະ;

9) ທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ເປັນຄະນະ;
10) ທ່ານ ກົງຈິ ຢ່າງຈື ຮອງລັດຖະມົນຕີກະຊວງຍຸຕິທຳ ເປັນຄະນະ;
11) ທ່ານ ບຸນຂວາງ ທະວີສັກ ຮອງປະທານສານປະຊາຊົນສູງສຸດ ເປັນຄະນະ;
12) ທ່ານ ອິນທະປັນຍາ ຊຽວວົງພະຈັນ ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ ເປັນຄະນະ;
13) ທ່ານ ນາງ ພອນເພັດ ອຸ່ນແກ້ວ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຄະນະ;
14) ທ່ານ ທັນຕາ ກອງພາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ເປັນຄະນະ;
15) ທ່ານ ມະນີໂສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເປັນຄະນະ;
16) ທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເປັນຄະນະ;
17) ທ່ານ ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ ເປັນຄະນະ;
18) ທ່ານ ນາງ ກັນທິນາ ປ້ານອິນທອນ ຫົວໜ້າກົມຕິດຕາມກວດກາວຽກງານຍຸຕິທຳ ເປັນຄະນະ;
19) ທ່ານ ບຸນຍົງ ພົນເສນາ ຫົວໜ້າກົມກົດໝາຍ ເປັນຄະນະ;
20) ທ່ານ ໂພໄຊ ເພັດພູທອນ ຫົວໜ້າກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ ເປັນຄະນະ.

❖ **ສິດ ແລະ ໜ້າທີ່**

ອະນຸກຳມະການເນື້ອໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1) ແບ່ງງານ, ແບ່ງຄວາມຮັບຜິດຊອບ ພາຍໃນອະນຸກຳມະການເນື້ອໃນ ໃຫ້ແຕ່ລະທ່ານຢ່າງຈະແຈ້ງ;
2) ສ້າງແຜນການດຳເນີນງານ ແລະ ແຕ່ງຕັ້ງໜ່ວຍງານຊ່ວຍວຽກ ຂອງອະນຸກຳມະການເນື້ອໃນ;
3) ຄົ້ນຄວ້າ, ລົງເລິກ ກ່ຽວກັບການປັບປຸງເນື້ອໃນຂອງລັດຖະທຳມະນູນໃນແຕ່ລະໝວດ ແລະ ມາດຕາ;
4) ປະສານສົມທົບກັບ ອະນຸກຳມະການອື່ນ ແລະ ກອງເລຂາ ກ່ຽວກັບການປັບປຸງລັດຖະທຳມະນູນ;
5) ສະເໜີຄຳຄິດຄຳເຫັນຕໍ່ຄະນະປະຈຳການ ເພື່ອຂໍທິດຊີ້ນຳ ແລະ ພິຈາລະນາບັນຫາຕ່າງໆ ກ່ຽວກັບການປັບປຸງລັດຖະທຳມະນູນ;
6) ເຂົ້າຮ່ວມ ກອງປະຊຸມຄະນະກຳມະການລະດັບຊາດ, ກອງປະຊຸມຄະນະປະຈຳການ ແລະ ກອງປະຊຸມຂອງແຕ່ລະອະນຸກຳມະການ ກ່ຽວກັບການປັບປຸງລັດຖະທຳມະນູນ;
7) ສັງລວມເອົາບັນດາເນື້ອໃນ ຂອງລັດຖະທຳມະນູນ ທີ່ໄດ້ປັບປຸງ ເພື່ອຮຽບຮຽງ ແລະ ສັບຊ້ອນເຂົ້າບັນດາໝວດ ແລະ ມາດຕາ;
8) ສະຫຼຸບສັງລວມການເຄື່ອນໄຫວວຽກງານຂອງຕົນ ເພື່ອລາຍງານຄະນະປະຈຳການ;
9) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**2. ອະນຸກຳມະການໂຄສະນາ:**

1) ທ່ານ ນາງ ສວນສະຫວັນ ວິຍະເກດ ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຫົວໜ້າ;
2) ທ່ານ ຄຳໄຫຼ ສີປະເສີດ ຮອງປະທານສູນກາງແນວລາວສ້າງຊາດ ເປັນຮອງຫົວໜ້າ;
3) ທ່ານ ຄຳຈັນ ໂສດາປະເສີດ ປະທານກຳມາທິການບັນດາເຜົ່າ ເປັນຮອງຫົວໜ້າ;
1) ທ່ານ ອຳໄພ ຈິດມານົງ ຮອງປະທານກຳມາທິການກົດໝາຍ ເປັນຄະນະ;

4) ທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ ເປັນຄະນະ;
5) ທ່ານ ສົມສະຫວາດ ພົງສາ ຫົວໜ້າກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
6) ທ່ານ ເພັດລາ ພັນທະວົງສາ ຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ ເປັນຄະນະ;
7) ທ່ານ ອານົງສັກ ອິນທະວົງ ຫົວໜ້າກົມໂຄສະນາ, ຄະນະໂຄສະນາອົບຮົມສູນກາງພັກ ເປັນຄະນະ;
8) ທ່ານ ນາງ ແພງພັນ ບຸຜາພອນ ຫົວໜ້າກົມໂຄສະນາ ສູນກາງແນວລາວສ້າງຊາດ;
9) ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າກົມສື່ມວນຊົນ ສະພາແຫ່ງຊາດ ເປັນຄະນະ.

❖ **ສິດ ແລະ ໜ້າທີ່**

ອະນຸກຳມະການໂຄສະນາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1) ແບ່ງງານ, ແບ່ງຄວາມຮັບຜິດຊອບ ພາຍໃນອະນຸກຳມະການໂຄສະນາ ໃຫ້ແຕ່ລະທ່ານ ຮັບຜິດຊອບ ຢ່າງຈະແຈ້ງ;
2) ສ້າງແຜນການດຳເນີນງານ ແລະ ແຕ່ງຕັ້ງໜ່ວຍງານຊ່ວຍວຽກ ຂອງອະນຸກຳມະການໂຄສະນາ;
3) ນຳເອົາຮ່າງລັດຖະທຳມະນູນ ລົງທາບທາມຄຳເຫັນ ດ້ວຍຮູບການຕ່າງໆ ເປັນຕົ້ນ ຜ່ານສື່ສິ່ງພິມ, ສື່ເອເລັກໂຕຣນິກ ພ້ອມທັງສັງລວມຄຳເຫັນ ເພື່ອສົ່ງໃຫ້ອະນຸກຳມະການເນື້ອໃນ;
4) ຖະແຫຼງຂ່າວ ກ່ຽວກັບຜົນສຳເລັດ ຂອງການປັບປຸງລັດຖະທຳມະນູນ;
5) ປະສານສົມທົບກັບ ບັນດາອະນຸກຳມະການ ແລະ ກອງເລຂາ ກ່ຽວຂ້ອງກັບການປັບປຸງລັດຖະທຳມະນູນ;
6) ສະເໜີຄຳຄິດຄຳເຫັນຕໍ່ຄະນະປະຈຳການ ເພື່ອຂໍທິດຊີ້ນຳ ແລະ ພິຈາລະນາບັນຫາຕ່າງໆ ກ່ຽວກັບການປັບປຸງລັດຖະທຳມະນູນ;
7) ເຂົ້າຮ່ວມ ກອງປະຊຸມຄະນະກຳມະການລະດັບຊາດ, ກອງປະຊຸມຄະນະປະຈຳການ ແລະ ກອງປະຊຸມຂອງແຕ່ລະອະນຸກຳມະການ ກ່ຽວກັບການປັບປຸງເນື້ອໃນລັດຖະທຳມະນູນ;
8) ສະຫຼຸບສັງລວມການເຄື່ອນໄຫວວຽກງານຂອງຕົນ ເພື່ອລາຍງານຄະນະປະຈຳການ;
9) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

**3. ອະນຸກຳມະການບໍລິຫານ, ພິທີການ ແລະ ການເງິນ**

2) ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ເປັນຫົວໜ້າ;
3) ທ່ານ ພູວົງ ກິດຕະວົງ ຮອງລັດຖະມົນຕີກະຊວງການເງິນ ເປັນຮອງຫົວໜ້າ;
4) ທ່ານ ຮສ.ປອ. ສົມກຽດ ພະສີ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຮອງຫົວໜ້າ;
5) ທ່ານ ພົຈວ. ປອ. ມາລາ ວິລະຈິດ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຄະນະ;
6) ທ່ານ ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ ເປັນຄະນະ;
7) ທ່ານ ນາງ ດາວເພັດ ສີຫາວົງ ຫົວໜ້າກົມການເງິນ ສະພາແຫ່ງຊາດ ເປັນຄະນະ;
8) ທ່ານ ໜູເຊີຍ ພົມສີຈັນ ຫົວໜ້າກົມງົບປະມານ ກະຊວງການເງິນ ເປັນຄະນະ;
9) ທ່ານ ປອ. ອາລຸນຍະເດດ ຣາຊາພົນ ຫົວໜ້າກົມບໍລິຫານ-ພິທີການ ສະພາແຫ່ງຊາດ ເປັນຄະນະ.

❖ **ສິດ ແລະ ໜ້າທີ່**

ອະນຸກຳມະການບໍລິຫານ, ພິທີການ ແລະ ການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1) ແບ່ງງານ, ແບ່ງຄວາມຮັບຜິດຊອບ ພາຍໃນອະນຸກຳມະການບໍລິຫານ, ພິທີການ ແລະ ການເງິນ ໃຫ້ແຕ່ລະທ່ານ ຮັບຜິດຊອບ ຢ່າງຈະແຈ້ງ;
2) ສ້າງແຜນງົບປະມານ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານການປັບປຸງເນື້ອໃນລັດຖະທຳມະນູນ;
3) ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ທາງດ້ານງົບປະມານ ໃຫ້ແກ່ຄະນະກຳມະການລະດັບຊາດ, ຄະນະປະຈຳການ, ອະນຸກຳມະການ ແລະ ກອງເລຂາ ກ່ຽວກັບການປັບປຸງລັດຖະທຳມະນູນ;
4) ຄຸ້ມຄອງ ແລະ ສະຫຼຸບລາຍຈ່າຍງົບປະມານ ຕາມລະບຽບການ;
5) ກະກຽມດ້ານສະຖານທີ່, ຫ້ອງປະຊຸມ, ພາຫະນະ, ອຸປະກອນ ໃນການຈັດກອງປະຊຸມຄະນະກຳມະການລະດັບຊາດ, ກອງປະຊຸມຄະນະປະຈຳການ, ກອງປະຊຸມສຳມະນາວິທະຍາສາດ ແລະ ກອງປະຊຸມທາບທາມຄຳເຫັນ ແລະ ເຂົ້າຮ່ວມກອງປະຊຸມດັ່ງກ່າວ;
6) ຈັດພິມປຶ້ມລັດຖະທຳມະນູນ;
7) ປະສານສົມທົບກັບ ບັນດາອະນຸກຳມະການ ແລະ ກອງເລຂາ ກ່ຽວກັບການປັບປຸງລັດຖະທຳມະນູນ;
8) ສະຫຼຸບສັງລວມການເຄື່ອນໄຫວວຽກງານຂອງຕົນ ເພື່ອລາຍງານຄະນະປະຈຳການ;
9) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 2 ແຕ່ງຕັ້ງກອງເລຂາຂອງຄະນະກຳມະການລະດັບຊາດ ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງນີ້:**

1. ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ເປັນຫົວໜ້າ;
2. ທ່ານ ປອ. ບົວຄົງ ນາມມະວົງ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຮອງຫົວໜ້າ;
3. ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເປັນຮອງຫົວໜ້າ;
4. ທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເປັນຄະນະ;
5. ທ່ານ ຮສ. ປອ. ວຽງວິໄລ ທ່ຽງຈັນໄຊ ຮອງປະທານກຳມາທິການຍຸຕິທຳ ເປັນຄະນະ;
6. ທ່ານ ຄຳຜາ ພິມມະສອນ ຮອງຫົວໜ້າຫ້ອງວ່າການສູນກາງພັກ ເປັນຄະນະ;
7. ທ່ານ ສີງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ ເປັນຄະນະ;
8. ທ່ານ ສົມທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ເປັນຄະນະ;
9. ທ່ານ ພອນແກ້ວ ຕົ້ນວໍລະຈິດ ຫົວໜ້າກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ເປັນຄະນະ;
10. ທ່ານ ຄຳສະໄໝ ສຳມະວົງ ຫົວໜ້າກົມເລຂານຸການ ເປັນຄະນະ;
11. ທ່ານ ຕູ້ຊົ່ງ ບົວສີຕົ່ງສື ຫົວໜ້າກົມພັດທະນາວຽກງານສະພາ ເປັນຄະນະ;
12. ທ່ານ ບໍ ທານປະເສີດ ຫົວໜ້າສູນຄົ້ນຄວ້າວິທະຍາສາດ ແລະ ນິຕິກຳ ເປັນຄະນະ.

❖ **ສິດ ແລະ ໜ້າທີ່**

ກອງເລຂາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1) ແບ່ງງານ, ແບ່ງຄວາມຮັບຜິດຊອບ ພາຍໃນກອງເລຂາ ໃຫ້ແຕ່ລະທ່ານ ຮັບຜິດຊອບ ຢ່າງຈະແຈ້ງ;

2) ສ້າງແຜນການດຳເນີນງານຂອງ ຄະນະກຳມະການລະດັບຊາດ ແລະ ຄະນະປະຈຳການ;
3) ແຕ່ງຕັ້ງໜ່ວຍງານຊ່ວຍວຽກຂອງກອງເລຂາ;
4) ປະສານສົມທົບກັບ ອະນຸກຳມະການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການປັບປຸງລັດຖະທຳມະນູນ;
5) ກະກຽມເນື້ອໃນ ກອງປະຊຸມຄະນະກຳມະການລະດັບຊາດ ແລະ ກອງປະຊຸມຄະນະປະຈຳການ;
6) ເປັນຈຸດໃຈກາງປະສານງານໃຫ້ແກ່ ຄະນະກຳມະການລະດັບຊາດ, ຄະນະປະຈຳການ ແລະ ອະນຸກຳມະການຕ່າງໆ;
7) ຊ່ວຍຄະນະປະຈຳການ ສະຫຼຸບ, ສັງລວມ ເນື້ອໃນຂອງລັດຖະທຳມະນູນ ທີ່ໄດ້ປັບປຸງ ເພື່ອໃຫ້ຄະນະປະຈຳການ ນຳໄປລາຍງານໃນ ກອງປະຊຸມຄະນະກຳມະການລະດັບຊາດ, ກອງປະຊຸມກົມການເມືອງສູນກາງພັກ, ກອງປະຊຸມຄະນະບໍລິຫານງານສູນກາງພັກ ແລະ ກອງປະຊຸມສະພາແຫ່ງຊາດ;
8) ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຄະນະກຳມະການລະດັບຊາດ ແລະ ຄະນະປະຈຳການໄດ້ເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຕາມແຜນການ;
9) ສະຫຼຸບ ແລະ ສັງລວມການເຄື່ອນໄຫວວຽກງານຂອງຕົນ ເພື່ອລາຍງານຕໍ່ຄະນະປະຈຳການ;
10) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 3 ການຮັບຮູ້ ແລະ ການຮ່ວມມື**

ຄະນະກຳມະການລະດັບຊາດ, ຄະນະປະຈຳການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ເພື່ອເຮັດໃຫ້ການປັບປຸງລັດຖະທຳມະນູນ ສະບັບນີ້ ໃຫ້ສຳເລັດຕາມລະດັບຄາດໝາຍ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳການ ຄະນະກຳມະການລະດັບຊາດ**
**ປັບປຸງລັດຖະທຳມະນູນ**
**ຫົວໜ້າ**

ປອ ໄຊສົມພອນ ພົມວິຫານ